# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ..................................................... 1

II. ການເຄືອນໄຫວຂອງການນໍາ ຄະນະພົວພັນຕ່າງປະເທດສູນກາງພັກ ........................................................ 8


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນ ທັນວາ 2024**


**ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 1/12/2024, ສູນກາງພັກກອມມູນິດຫວຽດນາມ ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດມະຕິ 18 ຂອງສູນກາງພັກ, ລາຍງານສະພາບເສດຖະກິດ-ສັງຄົມ 11 ເດືອນ ປີ 2024, ມາດຕະການ ປີ 2025 ແລະ ແກ້ໄຂບັນດາຂອດຂັ້ນອັດຕັນດ້ານລະບຽບການ, ສູນກາງພັກ ໄດ້ສະເໜີຮູບແບບການສັບຊ້ອນກົງຈັກການຈັດຕັ້ງ ຂອງລະບົບການເມືອງ, ໂດຍແຜນການສັບຊ້ອນກົງຈັກການຈັດຕັ້ງບັນດາກະຊວງ ຂະແໜງການທີ່ກ່ຽວຂ້ອງ, ຕ້ອງມີການສັບຊ້ອນຄືນ, ມີແຜນລາຍງານຄະນະຊີ້ນໍາ ກ່ອນວັນທີ 31/12/2024 ເພື່ອຈະໄດ້ຄົ້ນຄວ້າພິຈາລະນາໃຫ້ສໍາເລັດກ່ອນ ວັນທີ 15/2/2025 ແລະ ຄະນະຊີ້ນໍາ ຕ້ອງໃຫ້ສໍາເລັດບົດລາຍງານລວມໃຫ້ກົມການເມືອງ ກ່ອນວັນທີ 28/02/2025 ເພື່ອສະເໜີຜ່ານໃນກອງປະຊຸມຄະນະບໍລິຫານງານສູນກາງພັກ ທີ່ຄາດວ່າຈະມີຂຶ້ນໃນກາງເດືອນມີນາ 2025. ພາຍຫຼັງການປັບປຸງກົງຈັກລັດຖະບານ ໄດ້ຫຼຸດລົງ 5 ກະຊວງ, 4 ຂະແໜງການຂຶ້ນກັບລັດຖະບານ, ເຊິ່ງກົງຈັກລັດຖະບານຈະກະທັດຮັດລົງຈາກ 30 ພາກສ່ວນ ເຫຼືອ 21 ພາກສ່ວນ ຄື ປະກອບມີ 13 ກະຊວງ, 4 ທະບວງກົມທຽບເທົ່າກະຊວງ ແລະ 4 ຂະແໜງການຂຶ້ນກັບລັດຖະບານ. ໄດ້ຫຼຸດຈໍານວນກໍາມາທິການຂອງສະພາແຫ່ງຊາດລົງ 4 ກໍາມາທິການ, ຍັງເຫຼືອພຽງ 5 ກໍາມະທິການ, ນອກນີ້, ຍັງມີການໂຮມ ບັນດາອົງການຂອງພັກ, ແນວໂຮມປະເທດຊາດຫວຽດນາມ, ບັນດາອົງການຈັດຕັ້ງການເມືອງທາງສັງຄົມ, ອົງການຈັດຕັ້ງມະຫາຊົນຕ່າງໆ ພ້ອມນີ້ບັນດາໜ່ວຍງານທີ່ຢູ່ຂັ້ນແຂວງເມືອງ ແລະ ອື່ນໆ ກໍຈະຕ້ອງໄດ້ປັບປຸງ, ໂຮມ ຫຼື ຢຸດຕິພາລະບົດບາດ ເພື່ອໃຫ້ສົມຄູ່ ແລະ ສອດຄ່ອງກັບສາຍຕັ້ງຢູ່ສູນກາງ.

ວັນທີ 22/12/2024, ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ອອກມະຕິເລກທີ 57-NQ/TW ວ່າດ້ວຍການສ້າງຄະນະການພັດທະນາວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ການຫັນເປັນດີຈີຕອນ ແຫ່ງຊາດ ໂດຍມີສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ເປັນຫົວໜ້າຄະນະ ຊຶ່ງ ສະຫາຍ ໄດ້ຊີ້ແຈງມະຕິດັ່ງກ່າວວ່າ: ການພັດທະນາວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ການຫັນເປັນດີຈີຕອນ ແມ່ນປັດໄຈຕັດສິນການພັດທະນາຂອງປະເທດ; ແມ່ນເງື່ອນໄຂທີ່ເໝາະສົມ ແລະ ເປັນໂອກາດດີທີ່ສຸດເພື່ອໃຫ້ປະເທດໄດ້ຮັບການພັດທະນາຢ່າງອຸດົມສົມບູນ ແລະ ເຂັ້ມແຂງໃນຍຸກໃໝ່ - ຍຸກແຫ່ງຄວາມກ້າວໜ້າຂອງປະເທດຊາດ ກໍຄືການສ້າງຫວຽດນາມ ໃຫ້ກາຍເປັນປະເທດພັດທະນາທີ່ມີອຸດສາຫະກໍາທັນສະໄໝ ແລະ ມີລາຍຮັບປານກາງສູງໃນປີ 2030 ແລະ ເປັນປະເທດພັດທະນາທີ່ມີລາຍຮັບສູງ ໃນປີ 2045. ໃນໄລຍະທີ່ຜ່ານມາ, ພັກ ແລະ ລັດ ໄດ້ມີຫຼາຍທິດທາງ ແລະ ນະໂຍບາຍຊຸກຍູ້ການນໍາໃຊ້ ແລະ ພັດທະນາວິທະຍາສາດເຕັກໂນໂລຊີ, ຊຸກຍູ້ການປະດິດສ້າງ ແລະ ການຫັນເປັນດີຈີຕອນ ຢ່າງຕັ້ງໜ້າ ແລະ ເຂົ້າຮ່ວມການປະຕິວັດເຄືອຂ່າຍອຸດສາຫະກໍາ ທີ 4 ບັນລຸໄດ້ບັນດາໝາກຜົນສໍາຄັນ. ເຖິງຢ່າງໃດກໍຕາມ, ຄວາມໄວ ແລະ ຄວາມກ້າວໜ້າໃນການພັດທະນາວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ການຫັນເປັນດີຈີຕອນ ແຫ່ງຊາດ ຍັງຊັກຊ້າ; ທ່າແຮງ, ລະດັບວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ຍັງຫ່າງໄກຈາກກຸ່ມປະເທດພັດທະນາ; ລະດັບຄວາມຮັບຮູ້ຂອງພະນັກງານ, ລັດຖະກອນ ແລະ ປະຊາຊົນ ກ່ຽວກັບ ການຫັນເປັນດີຈີຕອນ ຍັງບໍ່ທັນຄົບຖ້ວນ ເລິກເຊິ່ງ; ສະຖາບັນກົດໝາຍ, ກົນໄກ ແລະ ນະໂຍບາຍບໍ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານ.

### 2) ພັກກອມມູນິດຈີນ

ວັນທີ 6/12/2024, ສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມສົນທະນາກັບບຸກຄົນນອກພັກ ເພື່ອຮັບຟັງຄວາມຄິດເຫັນ ແລະ ຂໍ້ສະເໜີຕໍ່ສະພາບເສດຖະກິດໃນປີ 2024 ກໍຄື ວຽກງານເສດຖະກິດໃນຕໍ່ໜ້າ ໂດຍການເປັນປະທານຂອງ ສະຫາຍ ສີ ຈິ້ນຜິງ (Xi Jinping), ເລຂາທິການໃຫຍ່ ຄະນະກໍາມະການສູນກາງພັກກອມມູນິດຈີນ. ຊຶ່ງໄດ້ກ່າວເນັ້ນໜັກວ່າ: ປີ 2025 ຄວນຕັ້ງໜ້າປະຕິບັດວຽກເສດຖະກິດ ໃຫ້ໄດ້ດີກວ່າເກົ່າ, ຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ, ເຮັດສໍາເລັດເປົ້າໝາຍ ແລະ ພາລະກິດທີ່ກໍານົດໄວ້ ໃນແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ

14 ດ້ວຍຄຸນນະພາບສູງ ເພື່ອສ້າງພື້ນຖານທີ່ໜັກແໜ້ນ ໃນການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 15 ຕໍ່ໄປ.

ວັນທີ 9/12/2024, ຄະນະກຳມະການກົມການເມືອງສູນກາງພັກກອມມູນິດຈີນ ໄດ້ຈັດການຮ່ຳຮຽນລວມໝູ່ ຄັ້ງທີ 18 ພາຍໃຕ້ຫົວຂໍ້ "ການປົກຄອງເຂດຊາຍແດນໃນປະຫວັດສາດຂອງຈີນ". ສະຫາຍ ສີ ຈິ້ນຜິງ (Xi Jinping), ເລຂາທິການໃຫຍ່ ໄດ້ເປັນປະທານ ແລະ ກ່າວເນັ້ນໜັກວ່າ: ການຊຸກຍູ້ລະບົບບໍລິຫານ ແລະ ຄວາມສາມາດການປົກຄອງເຂດຊາຍແດນໃຫ້ທັນເປັນແບບທັນສະໄໝ ເປັນເນື້ອໃນທີ່ໄດ້ລະບຸໄວ້ໃນຄວາມທັນສະໄໝແບບຈີນ; ຕ້ອງຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງກອງປະຊຸມໃຫຍ່ຄັ້ງທີ XX ຂອງພັກກອມມູນິດຈີນ ກໍຄື ກອງປະຊຸມຄົບຄະນະຄັ້ງທີ 2 ແລະ ຄັ້ງທີ 3 ຂອງຄະນະກຳມະການສູນກາງພັກສະໄໝທີ XX ຢ່າງຕັ້ງໜ້າ, ຈັດຕັ້ງປະຕິບັດແຜນນະໂຍບາຍຕ່າງໆຂອງສູນກາງພັກ ກ່ຽວກັບ ການປົກຄອງເຂດຊາຍແດນ ໃຫ້ສຳເລັດຢ່າງດີ ແລະ ລົງສູ່ລວງເລິກ ເພື່ອຊຸກຍູ້ເຂດຊາຍແດນ ໃຫ້ໄດ້ຮັບການພັດທະນາດ້ວຍຄຸນນະພາບສູງ.

ວັນທີ 11-12/12/2024, ສະຫາຍ ສີ ຈິ້ນຜິງ (Xi Jinping), ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມສະຫຼຸບວຽກງານເສດຖະກິດສູນກາງຈີນ ປີ 2024 ແລະ ວາງທິດທາງແຜນການ ປີ 2025. ສະຫາຍ ໄດ້ເນັ້ນໜັກວ່າ: ຕ້ອງຍຶດໝັ້ນທິດທາງລວມຂອງພັກ ຕໍ່ວຽກງານເສດຖະກິດ, ເລັ່ງລັດສ້າງສະພາບການພັດທະນາແບບໃໝ່, ຊຸກຍູ້ການພັດທະນາທີ່ມີຄຸນນະພາບສູງ, ລົງເລິກການປະຕິຮູບຢ່າງຮອບດ້ານຕື່ມອີກ, ເປີດກວ້າງການເປີດປະຕູສູ່ພາຍນອກທີ່ມີລະດັບສູງ, ສ້າງລະບົບອຸດສາຫະກຳທີ່ທັນສະໄໝ, ວາງແຜນການພັດທະນາ ໃຫ້ດີກວ່າເກົ່າ, ຈັດຕັ້ງປະຕິບັດນະໂຍບາຍມະຫາພາກ ໃຫ້ເກີດຜົນກວ່າເກົ່າ, ຊຸກຍູ້ການປະດິດສ້າງໃໝ່ ດ້ານວິທະຍາສາດເຕັກໂນໂລຊີ, ຮັບປະກັນຄວາມໝັ້ນຄົງ ຂອງຕະຫຼາດອະສັງຫາລິມະຊັບ ແລະ ຕະຫຼາດຫຼັກຊັບ, ປ້ອງກັນ ແລະ ແກ້ໄຂຄວາມສ່ຽງໃນຂົງເຂດສຳຄັນ ແລະ ການໂຈມຕີຈາກພາຍນອກ, ຮັບປະກັນໃຫ້ການຄາດຄະເນ ມີຄວາມຖືກຕ້ອງ, ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນຢ່າງບໍ່ຢຸດຢັ້ງ, ຮັກສາຄວາມສາມັກຄີ ແລະ ຄວາມສະຫງົບໃນສັງຄົມ.

ໃນໃນລະຫວ່າງວັນທີ 18-20/12/2024, ສະຫາຍ ສີ ຈິ້ນຜິງ (Xi Jinping), ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ຢ້ຽມຢາມເຂດບໍລິຫານພິເສດມາກາວ ເພື່ອເຂົ້າຮ່ວມພິທີລະນຶກມາກາວກັບຄືນສູ່ປະເທດຊາດ ຄົບຮອບ 25 ປີ, ເຂົ້າຮ່ວມພິທີສາບານເຂົ້າຮັບຕຳແໜ່ງຂອງ ທ່ານ ສາມຫູໄຟ (Sam Hou Fai), ເປັນຜູ້ບໍລິຫານເຂດບໍລິຫານພິເສດມາກາວ ຜູ້ທີ 6 ຕໍ່ຈາກ ທ່ານ ເຮີ້ຢີເສີງ. ໃນໂອກາດນີ້, ສະຫາຍ ສີ ຈິ້ນຜິງ ກ່າວວ່າ: ຜົນງານອັນໃຫຍ່ຫຼວງຂອງມາກາວ ໄດ້ສະແດງໃຫ້ໂລກເຫັນວ່າ "ປະເທດດຽວ, ສອງລະບອບ" ມີຄວາມເຂັ້ມແຂງດ້ານການບໍລິຫານທີ່ພົ້ນເດັ່ນ ແລະ ມີຂະໜາດໃຫຍ່ຫຼວງ; ການປະຕິບັດ "ປະເທດດຽວ, ສອງລະບອບ" ໄດ້ຮັບຜົນສຳເລັດເປັນຢ່າງດີ, ຊົມເຊີຍມາກາວ ໃນການພັດທະນາເສດຖະກິດ ແລະສັງຄົມ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ການຂະຫຍາຍການຮ່ວມມືກັບຕ່າງປະເທດ; ປະຊາຊົນມາກາວ ມີສິດ ແລະ ເສລີພາບທີ່ກວ້າງຂວາງກວ່າທຸກເວລາໃນປະຫວັດສາດ, ສະແດງອອກໃນປີ 2023, GDP ຂອງ ມາກາວ ເພີ່ມຂຶ້ນເຖິງ 7 ເທົ່າ ຂອງຕົວເລກໃນ ປີ 1999. GDP ຕໍ່ຫົວຄົນໃນປັດຈຸບັນຢູ່ໃນອັນດັບທີ່ສູງທີ່ສຸດໃນໂລກ. ມາກາວ ຍັງເປັນຫນຶ່ງໃນສະຖານທີ່ປອດໄພທີ່ສຸດໃນທົ່ວໂລກ. ການສຶກສາແມ່ນບໍ່ເສຍຄ່າຈາກການອະນຸບານເຖິງການສຶກສາຊັ້ນສູງ ແລະ ອາຍຸຍືນສະເລ່ຍຂອງປະຊາຊົນເພີ່ມຂຶ້ນເປັນ 83.1 ປີ; ສະຫາຍ ໄດ້ ຮຽກຮ້ອງໃຫ້ລັດຖະບານຊຸດໃໝ່ຂອງມາກາວ ສືບຕໍ່ນຳໃຊ້ຄວາມໄດ້ປຽບດ້ານການບໍລິຫານໃຫ້ດີຂຶ້ນໃນເງື່ອນໄຂ "ປະເທດດຽວ, ສອງລະບອບ" ເພື່ອການພັດທະນາຄຸນນະພາບສູງກວ່າເກົ່າ, ຮັກສາຄວາມສາມັກຄີ ແລະ ຄວາມຫມັ້ນຄົງຂອງສັງຄົມ. ຮຽກຮ້ອງໃຫ້ຊາວໜຸ່ມຢູ່ມາກາວ ຖືບົດບາດເປັນຜູ້ກໍ່ສ້າງ ແລະ ສືບຕໍ່ສ້າງສາ "ປະເທດດຽວ, ສອງລະບອບ".

### 3) ພັກກອມມູນິດກູບາ

ໃນວັນທີ 12-13/12/2024, ການນຳຂັ້ນສູງຂອງພັກກອມມູນິດກູບາ ໄດ້ໄຂກອງປະຊຸມຄົບຄະນະຄັ້ງທີ IX ຂອງຄະນະບໍລິຫານງານສູນກາງພັກກອມມູນິດກູບາ ເພື່ອປຶກສາຫາລື ບັນຫາເສດຖະກິດ-ສັງຄົມກູບາ ໃນທ່າມກາງສະພາບການທີ່ສັບສົນ ແລະ ບັນຫາທີ່ປະເທດພວມປະເຊີນໜ້າ, ຕີລາຄາການປະຕິບັດພັດການທະນາເສດຖະກິດ-

ສັງຄົມຂອງລັດຖະບານ, ຮ່າງແຜນການເສດຖະກິດ ແລະ ງົບປະມານ ປີ 2025, ເອົາໃຈໃສ່ຕໍ່ບັນດາຜູ້ປະກອບການເສດຖະກິດຂອງລັດ ແລະ ປະຕິບັດບັນດາໂຄງການຕົ້ນຕໍ ແລະ ເປັນບຸລິມະສິດຂອງປະເທດ.

**4) ການເມືອງເຢຍລະມັນ:**

ພາຍຫຼັງ ທ່ານ ໂອລາບ ໂຊບ (Olaf Scholz), ນາຍົກລັດຖະມົນຕີເຢຍລະມັນ ຖືກລົງມະຕິຖອດຖອນຈາກຕຳແໜ່ງ ໃນວັນທີ 16/12/2024 ດ້ວຍຄະແນນ 394 ສຽງ, ບໍ່ເຫັນດີ 207 ສຽງ, ງົດອອກສຽງ 116 ສຽງ ໃນຈຳນວນທັງໝົດ 733 ສຽງ; ແລະ ໃນວັນທີ 27/12/2024, ປະທານາທິບໍດີ ເຢຍລະມັນ ໄດ້ປະກາດຍຸບສະພາ ແລະ ຕ້ອງເລືອກຕັ້ງໃໝ່ ພາຍໃນ 60 ວັນ ພາຍຫຼັງການຍຸບສະພາ ຊຶ່ງຈະກົງກັບວັນທີ 23/02/2025. ບັນດາພັກການເມືອງຂອງເຢຍລະມັນ ໄດ້ມີການດຳເນີນການລົງຫາສຽງກະກຽມໃຫ້ແກ່ການເລືອກຕັ້ງທົ່ວປະເທດດັ່ງກ່າວ ຈາກຜົນຂອງການສຳຫຼວດເຫັນວ່າ: ກຸ່ມພັກອະນຸລັກນິຍົມ (CDU/CSU) ພາຍໃຕ້ການນຳຂອງ ທ່ານ ຟຣີຣິດ ເມີດ (Friedrich Merz), ປະທານພັກ CDU ໄດ້ຮັບຄະແນນນິຍົມເປັນອັນດັບໜຶ່ງ 32,5%, ຮອງລົງມາແມ່ນ ພັກທາງເລືອກເພື່ອເຢຍລະມັນ (AfD) ໂດຍແມ່ນ ທ່ານ ນາງ ອາລິດ ໄວເດນ (Alice Weidel), ປະທານຮ່ວມຂອງພັກ ໄດ້ 18,2% ຂຶ້ນຈາກອັນດັບ 5 ໃນການເລືອກຕັ້ງປີ 2021, ໃນຂະນະທີ່ ພັກສັງຄົມປະຊາທິປະໄຕ (SPD), ຊຶ່ງເປັນພັກກຳອຳນາດໃນປະຈຸບັນ ພາຍໃຕ້ການນຳຂອງ ທ່ານ ໂອລາບ ໂຊບ, ນາຍົກລັດຖະມົນຕີ ໄດ້ 15,2%, ພັກຂຽວ ໂດຍແມ່ນທ່ານ ໂຣເບີດ ຮາເບັກ (Robert Habeck), ປະທານພັກ ໄດ້ 12,3% ແລະ ພັກ ພັນທະມິດ ຊາຣາ (Alliance Sahra Wagenknecht) ພາຍໃຕ້ການນຳຂອງ ທ່ານ ນາງ ຊາຣາ ວາເຈນເນັດ (Sahra Wagenknecht) ແລະ ທ່ານ ນາງ ອາມີຣາ ໂມຮຳເມັດ ອາລີ (Amira Mohamed Ali), ໄດ້ຄະແນນນິຍົມ 6%. ສຳລັບພັກເສລີປະຊາທິປະໄຕ (FDP) ແລະ ພັກຊ້າຍ (The Left) ໄດ້ຄະແນນນິຍົມບໍ່ເຖິງ 5%, ຖ້າພັກການເມືອງໃດບໍ່ສາມາດໄດ້ຄະແນນນິຍົມ 5% ຂຶ້ນໄປ ຈະບໍ່ໄດ້ບ່ອນນັ່ງໃນລັດຖະສະພາ.

**5) ການເມືອງຝຣັ່ງ:**

ວັນທີ 02/12/ 2024, ລັດຖະບານສຽງສ່ວນໜ້ອຍຂອງ ທ່ານ ມິເຊວ ບາເນຍ (Michel Barnier), ນາຍົກລັດຖະມົນຕີຝຣັ່ງ ໄດ້ໃຊ້ອຳນາດພິເສດຂອງຕົນ ຕາມລັດຖະທຳມະນູນ ມາດຕາ 49.3 ຜ່ານຮ່າງກົດໝາຍການເງິນປະກັນສັງຄົມ (ໂດຍບໍ່ຜ່ານການລົງປະຊາມະຕິຈາກສະມາຊິກລັດຖະສະພາ) ເຮັດໃຫ້ກຸ່ມພັກການເມືອງຝ່າຍຂວາ ແລະ ຝ່າຍຊ້າຍ ບໍ່ພໍໃຈ ແລະ ໄດ້ລົງປະຊາມະຕິບໍ່ໄວ້ວາງໃຈຕໍ່ ທ່ານ Michel Barnier ໃນວັນທີ 6/12/2024 ເຮັດໃຫ້ທ່ານ Michel Barnier ຈຳເປັນຕ້ອງລາອອກຈາກ ນາຍົກລັດຖະມົນຕີ ແລະ ໃນວັນທີ 13/12/2024, ທ່ານ ເອມມານູເອວ ມາຄຣອງ (Emmanuel Macron) ໄດ້ແຕ່ງຕັ້ງ ທ່ານ ຟຣອງຊົວ ເບຣູ (Francois Bayrou) ຈາກພັກ Democratic movement (ພັກກາງຂວາ, ພັກທີ່ຮ່ວມກັບພັກຂອງລັດຖະບານ) ເປັນນາຍົກລັດຖະມົນຕີຝຣັ່ງຄົນໃໝ່.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ໄລຍະວັນທີ 28/11-3/12/2024, ທ່ານ ຫຼາຍ ຊິງເຕີ໋ (Lai Ching-te), ຜູ້ບໍລິຫານເຂດປົກຄອງຕົນເອງໄຕ້ຫວັນ ຂອງ ຈີນ ໄດ້ຢ້ຽມຢາມ 3 ປະເທດ ຈາກ 14 ປະເທດ ໃນໝູ່ເກາະປາຊີຟິກ ທີ່ຮັບຮູ້ໄຕ້ຫວັນ ເປັນລັດເອກະລາດ; ທັງໄດ້ຢ້ຽມຢາມເກາະກວມ ແລະ ເກາະ ຮາວາຍ ຂອງອາເມຣິກາ ໃນເວລາຕໍ່ມາ, ຊຶ່ງໄດ້ສ້າງຄວາມບໍ່ພໍໃຈແກ່ ສປ ຈີນ (ກ່ອນໜ້ານີ້ ອາເມຣິກາ ກໍໄດ້ປະກາດຂາຍອາວຸດໃຫ້ ໄຕ້ຫວັນ ໃນມູນຄ່າ 385 ລ້ານໂດລາສະຫະລັດ), ສປ ຈີນ ໄດ້ຕອບໂຕ້ດ້ວຍການຝຶກຊ້ອມຮົບອ້ອມເກາະໄຕ້ຫວັນ; ສ່ວນ ອາເມຣິກາ ກ່າວວ່າ ຈະໃຫ້ຖານທັບຂອງຕົນທີ່ປະຈຳການຢູ່ຍີ່ປຸ່ນ ແລະ ຟີລິບປິນ ຢູ່ໃນທ່າກຽມພ້ອມ ຖ້າ ຈີນ ມີການເຄື່ອນໄຫວທາງທະຫານຕໍ່ໄຕ້ຫວັນ, ຕໍ່ມາໃນວັນທີ 3-4/12/2024, ຈີນ ແລະ ຫວຽດນາມ ໄດ້ຮ່ວມກັນລາດຕະເວນ ຄັ້ງທີ 37 ຢູ່ອ່າວເປີຍປູ້ (Beibu Gulf : ແຖບເຂດເສດຖະກິດຂອງສອງຝ່າຍ) ໃນໄລຍະເດີນເຮືອທັງໝົດ 200 ກວ່າໄມທະເລ. ສອງຝ່າຍ ໄດ້ສົ່ງກຳປັ່ນກອງທັບເຮືອເຂົ້າຮ່ວມຝ່າຍລະ 4 ລຳ ໂດຍໄດ້ຝຶກຊ້ອມການແລກປ່ຽນດ້ານຂໍ້ມູນດ້ານອຸຕຸນິຍົມ ແລະ ອຸທົກກະສາດ, ຂໍ້ມູນສະພາບອາກາດ ແລະ ທະເລທິດທາງ ແລະ ຄວາມໄວການເດີນທະເລ ແລະ ຂໍ້ມູນອື່ນໆ; ຜັດປ່ຽນບັນຊາກອງລາດຕະເວນຮ່ວມ ເພື່ອຍົກສູງຄວາມສາມາດການປະສານສົມທົບລະຫວ່າງສອງຝ່າຍ ແລະ ໃນວັນທີ 29-

30/11/2024, ກອງທັບອາກາດຂອງຈີນ ແລະ ຣັດເຊຍ ໄດ້ຮ່ວມກັນຝຶກຊ້ອມຮົບທາງອາກາດ ໃນແຖບມະຫາສະໝຸດປາຊີຟິກ ໃກ້ທະເລຍີ່ປຸ່ນ, ເປັນການຝຶກຊ້ອມຮົບປະຈຳປີ ເພື່ອຮ່ວມກັນຮັກສາອ່າວດັ່ງກ່າວ ພ້ອມທັງເປັນການສະແດງຄວາມສາມາດຂອງກອງທັບອາກາດສອງປະເທດ.

ວັນທີ 3/12/2024, ທ່ານ ຢຸນ ສັກ ຢອນ (Yoon Suk Yeol), ປະທານາທິບໍດີ ສ. ເກົາຫຼີ ໄດ້ປະກາດພາວະສຸກເສີນ ໂດຍໃຫ້ເຫດຜົນວ່າບັນດາພັກຝ່າຍຄ້ານ ທີ່ມີສຽງສ່ວນຫຼາຍໃນສະພາ ຕ້ອງການປົດຕຳແໜ່ງໄອຍະການສູງສຸດ ແລະ ປະຕິເສດການສະເໜີແຜນງົບປະມານຂອງລັດຖະບານປະຈຳປີ 2025. ແຕ່ຍ້ອນການຄັດຄ້ານຂອງພັກຝ່າຍຄ້ານ ບວກກັບການປະທ້ວງຂອງປະຊາຊົນ ສ.ເກົາຫຼີ ຈຶ່ງເຮັດໃຫ້ ທ່ານ ຢຸນ ປະກາດຍົກເລີກກົດໄອຍະການເສິກ ໃນວັນທີ 4/12/2024, ແຕ່ທ່ານຍັງຈະສືບຕໍ່ດຳລົງຕຳແໜ່ງປະທານາທິບໍດີຕໍ່ໄປ. ໃນວັນທີ 14/12/2024, ຝ່າຍຄ້ານ ໄດ້ລົງມະຕິຖອດຖອນ ທ່ານ ຢຸນ ເປັນຄັ້ງທີ 2 ສຳເລັດ ດ້ວຍຄະແນນ 204 ສຽງ, ເກີນ 2/3 ຂອງສະມາຊິກສະພາທັງໝົດ, ແລ້ວຍື່ນຄຳຮ້ອງຖອດຖອນ ໃຫ້ສານລັດຖະທຳມະນູນ ເພື່ອພິຈາລະນາ ຕັດສິນວ່າ ທ່ານ ຢຸນ ຄວນຈະອອກຈາກຕຳແໜ່ງຫຼືບໍ. ຂະນະທີ່ ທ່ານ ຢຸນ ໄດ້ຖະແຫຼງວ່າ ຈະຕໍ່ສູ້ ຈົນສຸດຄວາມສາມາດ, ຈະບໍ່ຍອມລາອອກ ແລະ ກ່າວວ່າ ການປະກາດກົດໄອຍະການເສິກນັ້ນ ບໍ່ແມ່ນການກໍ່ກະບົດ, ແຕ່ເປັນອຳນາດພິເສດຂອງປະທານາທິບໍດີ ທີ່ສາມາດເຮັດໄດ້ ເພື່ອຮັກສາສະຖຽນລະພາບທາງການເມືອງ. ພາຍຫຼັງ ປະທານາທິບໍດີ ຖືກຖອດຖອນ, ຈຶ່ງເຮັດໃຫ້ ທ່ານ ຮັນ ດັກ ຊູ (Han Duck-Soo), ນາຍົກລັດຖະມົນຕີ ໄດ້ເປັນຮັກສາການປະທານາທິບໍດີ ນັບແຕ່ວັນທີ 14/12/2024 ເປັນຕົ້ນມາ ແລະ ໃນວັນທີ 24/12/2024, ຝ່າຍຄ້ານ ໄດ້ ສະເໜີຍັດຕິຖອດຖອນ ທ່ານ ຮັນ, ຮັກສາການປະທານາທິບໍດີ ຈາກກໍລະນີທີ່ທ່ານປະຕິເສດທີ່ຈະປະກາດການນຳໃຊ້ຮ່າງກົດໝາຍ ພິເສດ 2 ສະບັບ ເພື່ອສືບສວນປະທານາທິບໍດີ ຢຸນ ໃນຂໍ້ຫາປະກາດກົດໄອຍະການເສິກ ແລະ ພັນລະຍາ ໃນຂໍ້ຫາສໍ້ລາດບັງຫຼວງ.

ວັນທີ 10/12/2024, ຍີ່ປຸ່ນ, ອາເມຣິກາ ແລະ ຟີລິບປິນ ໄດ້ຈັດກອງປະຊຸມທາງທະເລ ສາມຝ່າຍ ຢູ່ນະຄອນຫຼວງໂຕກຽວ, ໂດຍມີການເຂົ້າຮ່ວມຂອງ ທ່ານ ລູ ນາການູຣະ (Ryo Nakamura), ຫົວໜ້າກົມອາຊີຕາເວັນອອກສ່ຽງໃຕ້ ແລະ ຕາເວັນຕົກສຽງໃຕ້, ກະຊວງການຕ່າງປະເທດຍີ່ປຸ່ນ; ທ່ານ ມີຣາ ລັບປູໂຮ ໂອເປຣາ (Mira Rapp-Hooper), ຜູ້ອຳນວຍການອາວຸໂສ ຝ່າຍອາຊີຕາເວັນອອກ ແລະ ໂອເຊອານີ ປະຈຳ ສະພາຄວາມໝັ້ນຄົງແຫ່ງຊາດອາເມຣິກາ ແລະ ທ່ານ ນາງ ເທຣີຊາ ລາຊາໂຣ (Theresa Lazaro), ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດຟີລິບປິນ. ກອງປະຊຸມໄດ້ແລກປ່ຽນ ກ່ຽວກັບ ສະຖານະການຢູ່ທະເລຈີນໃຕ້ ແລະ ປຶກສາຫາລືການຮັກສາ ແລະ ເສີມຂະຫຍາຍຄວາມເປັນລະບຽບຮຽບຮ້ອຍທາງທະເລ ທີ່ເສລີ ບົນພື້ນຖານກົດໝາຍສາກົນ. ຂະນະດຽວກັນ, ຫວຽດນາມ ແລະ ມາເລເຊຍ ໄດ້ຕົກລົງເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ, ເປັນການຍົກລະດັບການພົວພັນ ທີ່ຈະຮ່ວມມືກັນຢ່າງຮອບດ້ານ ລວມທັງຮ່ວມກັນແກ້ໄຂບັນຫາຄວາມຂັດແຍ່ງໃນທະເລຈີນໃຕ້. ໃນວັນທີ 23/12/2024, ທ່ານ ຣອຍ ກາລີໂດ້ (Roy Galido), ຜູ້ບັນຊາການທະຫານຂອງຟີລິບປິນ ໄດ້ກ່າວວ່າ ຟີລິບປິນ ມີແຜນຈະຊື້ລະບົບລູກສອນໄຟ Typhon ຈາກອາເມຣິກາ ເພື່ອນຳໃຊ້ໃນການປ້ອງກັນເກາະດອນຂອງຕົນ. ສ່ວນ ທ່ານ ນາງ ໝາວ ໜິງ (Mao Ning), ໂຄສົກກະຊວງການຕ່າງປະເທດຈີນ ປະນາມວ່າ: ເປັນການເຄື່ອນໄຫວທີ່ຍຸແຍ່ ແລະ ເປັນອັນຕະລາຍສ່ຽງທີ່ຈະເກີດການແຂ່ງຂັນທາງດ້ານອາວຸດ ແລະ ຮຽກຮ້ອງໃຫ້ຟີລິບປິນ ແກ້ໄຂການປະຕິບັດທີ່ບໍ່ຖືກຕ້ອງໂດຍໄວ ເພື່ອສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງໃນພາກພື້ນ.

ວັນທີ 7/12/2024, ຈີນ-ອິນໂດເນເຊຍ ໄດ້ສຳເລັດການເຝິກຊ້ອມວຽກງານກູ້ໄພພິບັດສຸກເສີນ ປີ 2024 ທີ່ໄດ້ຈັດຂຶ້ນຢູ່ຖານທັບອາກາດ ທີ່ນະຄອນຫຼວງຈາກາຕາ, ອິນໂດເນເຊຍ; ຊຶ່ງທັງສອງຝ່າຍ ໄດ້ສົ່ງກອງກຳລັງຈາກ 3 ເຫຼົ່າທັບ ຄື: ກອງທັບບົກ, ກອງທັບເຮືອ ແລະ ກອງທັບອາກາດ ຮ່ວມເຝິກຊ້ອມ ພາຍໃຕ້ຫົວຂໍ້ "ການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ບັນເທົາ ສາທາລະນະໄພ" ລວມເຖິງການແລກປ່ຽນດ້ານວັດທະນະທຳ ເປັນເວລາ 1 ອາທິດ ເພື່ອຮັດແໜ້ນການຮ່ວມມືພາກປະຕິບັດຕົວຈິງ ລະຫວ່າງ ສອງທອງທັບ, ຍົກສູງຄວາມສາມາດໃນການດຳເນີນການເຄື່ອນໄຫວຮ່ວມກັນຂອງກອງທັບ ເພື່ອພ້ອມກັນປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຂອງພາກພື້ນ.

ວັນທີ 16-20/12/2024, ກະຊວງປ້ອງກັນປະເທດກຳປູເຈຍ ໃຫ້ຊາບວ່າ ເຮືອຮົບ "USS Savannah" ຂອງອາເມຣິກາ ພ້ອມດ້ວຍລູກເຮືອຈຳນວນ 103 ຄົນ ໄດ້ເຂົ້າຈອດທຽບ ທ່າກຳປັ່ນ ເມືອງສີຫະນຸວິວ (Sihanoukville)

ທາງຕາເວັນຕົກສ່ຽງໃຕ້ຂອງກຳປູເຈຍ, ເປັນຄັ້ງທຳອິດໃນຮອບ 8 ປີ ທີ່ ກອງເຮືອຮົບຂອງອາເມຣິກາ ເຂົ້າຈອດຢູ່ກຳປູເຈຍ. ກະຊວງການຕ່າງປະເທດກຳປູເຈຍ ແລະ ສະຖານທູດອາເມຣິກາ ປະຈຳ ນະຄອນຫຼວງພະນົມເປັນ ໄດ້ອອກຖະແຫຼງການຮ່ວມສະແດງຄວາມຊົມເຊີຍ ຕໍ່ການຟື້ນຟູການພົວພັນທາງການທະຫານ ລະຫວ່າງສອງປະເທດ ແລະ ການຂະຫຍາຍຂອບການຮ່ວມມືສອງຝ່າຍໃນທຸກຂົງເຂດທີ່ກ່ຽວຂ້ອງ. ການພົວພັນລະຫວ່າງ ອາເມຣິກາ ແລະ ກຳປູເຈຍ ມີຄວາມເຄັ່ງຕຶງ ນັບຕັ້ງແຕ່ກຳປູເຈຍ ໃຫ້ ຈີນ ເຂົ້າມາປັບປຸງຖານທັບເຮືອຣຽມ (Riam) ທີ່ຕັ້ງຢູ່ລຽບຊາຍຝັ່ງຫ່າງຈາກ ເມືອງສີຫະນຸ ປະມານ 30 ກິໂລແມັດ, ເຊິ່ງເມື່ອກ່ອນ ສ່ວນໜຶ່ງຂອງຖານທັບດັ່ງກ່າວແມ່ນອາໄສການສະໜອງທຶນຈາກ ອາເມຣິກາ. ຕໍ່ການຢ້ຽມຢາມທ່າເຮືອກຳປູເຈຍຄັ້ງນີ້, ທາງການຈີນ ໄດ້ກ່າວວ່າ ການພົວພັນຮ່ວມມືດ້ານຄວາມໝັ້ນຄົງ ແລະ ການປ້ອງກັນປະເທດດັ່ງກ່າວ ຄວນມີສ່ວນສະໜັບສະໜູນ ແລະ ສົ່ງເສີມສັນຕິພາບ, ສະຖຽນລະພາບ ໃນພາກພື້ນ ຫຼາຍກວ່າ ຈະມີຈຸດປະສົງໄປໃນທາງກົງກັນຂ້າມ.

**2) ສະພາບການຢູ່ພາກພື້ນເອີຣົບ-ອາເມຣິກາ**

ບັນຫາອູແກຣນ-ຣັດເຊຍ: ພາຍຫຼັງອູແກຣນ ຍອມຮັບວ່າເປັນຜູ້ຢູ່ເບື້ອງຫຼັງເຫດການລະເບີດລອບສັງຫານ ນາຍພົນ ອີກໍ ຄີຣິລອບ (Igor Kirillov), ຜູ້ບັນຊາການກຳລັງອາວຸດນິວເຄລຍ, ອາວຸດເຄມີ ແລະ ຊີວະພາບຂອງຣັດເຊຍ ແລະ ຜູ້ຊ່ວຍ ອີກ 1 ຄົນ ເສຍຊີວິດ ໃນວັນທີ 17/12/2024 ຜ່ານມາ; ທາງການຣັດເຊຍ ໄດ້ກ່າວວ່າ ການກະທຳດັ່ງກ່າວ ສະແດງໃຫ້ເຫັນວ່າ ອູແກຣນ ບໍ່ໄດ້ລັງເລໃຈ ທີ່ຈະໃຊ້ການກໍ່ການຮ້າຍກັບຣັດເຊຍ; ຣັດເຊຍ ໄດ້ຕອບໂຕ້ ໂດຍການສົ່ງໂດຣນ 85 ລຳ ໂຈມຕີນະຄອນຫຼວງກີແອບຂອງອູແກຣນ ເຮັດໃຫ້ມີຜູ້ໄດ້ຮັບຄວາມເສຍຫາຍພໍສົມຄວນ; ທາງການຣັດເຊຍ ຍັງໄດ້ເປີດເຜີຍຂໍ້ມູນ ຜ່ານສຳນັກຂ່າວ RT, ໃນວັນທີ 18/12/2024 ຜ່ານມາ ວ່າ: ຕັ້ງແຕ່ເກີດຄວາມຂັດແຍ່ງໃນອູແກຣນ ແຕ່ວັນທີ 24/02/2022 ເປັນຕົ້ນມາ, ຣັດເຊຍ ສາມາດຄອບຄອງສະຖານທີ່ ໄດ້ 190 ແຫ່ງ, ທະຫານອູແກຣນ ເສຍຊີວິດ ແລະ ບາດເຈັບ 1 ລ້ານຄົນ; ທຳລາຍລົດຍົນ ໄດ້ 20,000 ຄັນ; ປືນໃຫຍ່ 19,500 ກະບອກ; ເຄື່ອງຍິງລູກສອນໄຟ 1,500 ເຄື່ອງ. ສ່ວນ ອູແກຣນ ໄດ້ໂຈມຕີໃສ່ໂຮງກັ່ນນໍ້າມັນຂອງຣັດເຊຍ ໃນພາກພື້ນຣອດສະຕ໋ອບ (Rostov Oblast) ທາງພາກໃຕ້ຂອງຣັດເຊຍ. ຕໍ່ສະຖານະການທີ່ເກີດຂຶ້ນ, ເຫັນວ່າ ຄວາມຂັດແຍ່ງໃນອູແກຣນ ຍັງບໍ່ມີທ່ອງທ່າຈະຢຸດຕິລົງໂດຍໄວ ເຖິງວ່າ ທ່ານ ໂດນານ ທຣຳ (Donald Trump), ວ່າທີ່ປະທານາທິບໍດີອາເມຣິກາ ກ່າວວ່າ ຈະຢຸດຕິຄວາມຂັດແຍ່ງດັ່ງກ່າວ ພາຍຫຼັງການຮັບຕຳແໜ່ງຂອງຕົນ ໃນເດືອນມັງກອນ 2025 ນີ້ ກໍຕາມ. ບັນດາປະເທດຕາເວັນຕົກ ກໍຍັງສືບຕໍ່ປະກາດຈະໃຫ້ການຊ່ວຍເຫຼືອອູແກຣນ, ເປັນຕົ້ນ ໃນວັນທີ 18/12/2024, ລັດຖະມົນຕີຕ່າງປະເທດອົດສະຕຣາລີ ໄດ້ປະກາດວ່າ ອົດສະຕຣາລີ ຈະກັບມາເປີດສະຖານທູດຂອງຕົນ ຢູ່ອູແກຣນອີກຄັ້ງ ພາຍຫຼັງໄດ້ປິດຕົວລົງ ຕັ້ງແຕ່ເກີດຄວາມຂັດແຍ່ງໃນອູແກຣນ ປີ 2022 ແລະ ຈະຊ່ວຍອູແກຣນ ຈັດຫາໄຟຟ້າ ໃນມູນຄ່າ 10 ລ້ານໂດລາອົດສະຕຣາລີ; ບັນດາປະເທດໃນເອີຣົບ ໃນນັ້ນມີ ເຢຍລະມັນ, ຝຣັ່ງ, ອີຕາລີ, ອັງກິດ ແລະ ໂປໂລຍ ພວມປຶກສາຫາລື ກ່ຽວກັບຄວາມເປັນໄປໄດ້ ໃນການສົ່ງກຳລັງຂອງຕົນ ໄປຊ່ວຍອູແກຣນ ປະມານ 100,000 ຄົນ. ສ່ວນອາເມຣິກາ ກະກຽມການຊ່ວຍເຫຼືອດ້ານອາວຸດ ມູນຄ່າ 725 ລ້ານໂດລາ ໃຫ້ແກ່ອູແກຣນ, ກ່ອນທີ່ ທ່ານ ໄບເດັນ ຈະພົ້ນຈາກຕຳແໜ່ງ ປະທານາທິບໍດີ.

ວັນທີ 09/12/2024, ຣັດເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະສະພາຂອງອົງການສົນທິສັນຍາຄວາມໝັ້ນຄົງລວມໝູ່ (Collective Security Treaty Organization : CSTO) ໂດຍການເປັນປະທານຂອງ ສະຫາຍ ເວຍເຊນລາບ ໂວໂລດິນ (Vycheslav Volodin), ໂຄສົກສະພາດູມາ (ເປັນກອງປະຊຸມລະດັບລັດຖະສະພາພາຍຫຼັງສຳເລັດ ກອງປະຊຸມສຸດຍອດ CSTO ທີ່ກາຊັກສະຖານ ໃນວັນທີ 28/11/2024 ຜ່ານມາ), ກອງປະຊຸມໄດ້ຮັບຮອງເອົາຖະແຫຼງການ ກ່ຽວກັບ ສະຖານະການຕາເວັນອອກກາງ ເຊິ່ງປະກອບມີ: ບັນຫາການປະທະກັນຂອງປາແລັດສະຕິນ-ອິດສະຣາແອນ ທີ່ໄດ້ສົ່ງຜົນກະທົບຢ່າງກ້ວາງຂວາງໃນທົ່ວພາກພື້ນ, ວິກິດການທີ່ຮຸນແຮງຢູ່ເຂດ Gaza ໄດ້ກາຍເປັນສາເຫດຂອງການປະທະກັນ ລະຫວ່າງ ລີບັງ-ອິດສະຣາແອນ; ຮຽກຮ້ອງໃຫ້ປະເທດທີ່ກ່ຽວຂ້ອງ ຮັກສາສະຖຽນລະພາບໃນຊີຣີ. ອົງການສົນທິສັນຍາຄວາມໝັ້ນຄົງລວມໝູ່ (CSTO) ສ້າງຕັ້ງຂຶ້ນໃນປີ 2002 ເປັນພັນທະມິດທາງທະຫານ ລະຫວ່າງລັດຖະບານໃນບັນດາປະເທດຢູເຣເຊຍ (Eurasia) ເຊິ່ງປະກອບດ້ວຍ 06 ປະເທດອະດີດສະຫະພາບໂຊວຽດ ຄື: ຣັດເຊຍ, ອາກເມນີ, ເບລາຣຸດຊີ, ກາຊັກສະຖານ, ກຽກກິດສະຖານ ແລະ ຕາຈິກິດສະຖານ.

ວັນທີ 16/12/2024, ຣັດເຊຍ ໄດ້ເປີດກອງປະຊຸມເຈົ້າໜ້າທີ່ປ້ອງກັນປະເທດຂັ້ນສູງ ພາຍໃຕ້ການເປັນປະທານຂອງ ທ່ານ Andrey Belousov, ລັດຖະມົນຕີກະຊວງປ້ອງກັນປະເທດຣັດເຊຍ ແລະ ການເຂົ້າຮ່ວມຂອງ ທ່ານ ວະລາດີເມຍ ປູຕິນ (Vladimir Putin), ປະທານາທິບໍດີຣັດເຊຍ. ກອງປະຊຸມ ໄດ້ປຶກສາຫາລື ກ່ຽວກັບ ການເສີມຂະຫຍາຍຄວາມສາມາດດ້ານການປ້ອງກັນປະເທດ ເຊັ່ນ: ການເຄື່ອນໄຫວທາງທະຫານຢູ່ອູແກຣນ, ຊຸກຍູ້ກຳລັງປະກອບອາວຸດ, ສິ່ງທ້າທາຍຕໍ່ເນື່ອງໃນປີ 2024, ບັນດາຜົນສຳເລັດຂອງວຽກງານປ້ອງກັນຊາດ, ສະຖານະການໃນທົ່ວໂລກ ແລະ ວາງມາດຕະການອື່ນໆ ເພື່ອຮັບປະກັນຄວາມໝັ້ນຄົງຂອງປະເທດ. ກອງທັບຣັດເຊຍ ໄດ້ສືບຕໍ່ປະຕິບັດໜ້າທີ່ຂອງຕົນໃນການປະທະກັນຢູ່ອູແກຣນ ແລະ ບ່ອນອື່ນໆ ເພື່ອຕ້ານກັບການແຊກແຊງຂອງອາເມຣິກາ ແລະ ຕາເວັນຕົກ ຂະນະທີ່ ອາເມຣິກາ ແລະ ບັນດາປະເທດພັນທະມິດ ສືບຕໍ່ເພີ່ມທະວີການຊ່ວຍເຫຼືອທາງດ້ານເງິນ ແລະ ອຸປະກອນທາງດ້ານການທະຫານໃຫ້ແກ່ອູແກຣນ ເພື່ອຕ້ານຣັດເຊຍ; ໃນຂະນະດຽວກັນ ຣັດເຊຍ ຕ້ອງກຽມພ້ອມຮັບມືກັບການປະທະໂດຍກົງກັບກຸ່ມນາໂຕ. ໃນກອງປະຊຸມ, ທ່ານ ອັນເດຣຍ ເບລູຊອບ (Andrey Belousov) ຍັງໄດ້ລາຍງານວ່າ ອາວຸດທີ່ມີຄວາມແມ່ນນອນສູງຂອງຣັດເຊຍ ໄດ້ສ້າງຄວາມເສຍຫາຍອັນໃຫຍ່ຫຼວງ ຕໍ່ອຸດສາຫະກຳປ້ອງກັນປະເທດ ແລະ ລະບົບການຜະລິດພະລັງງານຂອງອູແກຣນ ໂດຍສະເພາະໃນເຂດປະຕິບັດການພິເສດ ຫຼາຍກວ່າ 58,000 ສິ້ນສ່ວນ ໃນນັ້ນ 18,000 ສິ້ນສ່ວນ ທີ່ຜະລິດຈາກຕ່າງປະເທດ, ເຮັດໃຫ້ອູແກຣນ ສູນເສຍຄວາມສາມາດທີ່ຈະຜະລິດອາວຸດ, ອຸປະກອນ ແລະ ອາວຸດ ທີ່ຈຳເປັນ.

ໃນວັນທີ 22/12/2024, ທ່ານ ໂຣເບີດ ຟີໂກ (Robert Fico), ນາຍົກລັດຖະມົນຕີສະໂລວາກີ ຢ້ຽມຢາມຣັດເຊຍ ແລະ ພົບກັບ ທ່ານ ປູຕິນ, ປະທານາທິບໍດີຣັດເຊຍ ຊຶ່ງສອງຝ່າຍໄດ້ ປຶກສາຫາລື ກ່ຽວກັບ ຄວາມຂັດແຍ່ງໃນອູແກຣນ, ທ່ານ ວະລາດີເມຍ ປູຕິນ (Vladimir Putin) ກ່າວວ່າ ຖ້າຈະເຈລະຈາຢຸດຕິຄວາມຂັດແຍ່ງໃນອູແກຣນຈະຂໍໄປເຈລະຈາ ຢູ່ປະເທດສະໂລວາກີ. ຜູ້ນຳສອງຝ່າຍ ຍັງໄດ້ປຶກສາຫາລື ກ່ຽວກັບ ບັນຫາການສົ່ງກາສທຳມະຊາດໄປຍັງສະໂລວາກີ, ເນື່ອງຈາກສັນຍາສົ່ງກາສທຳມະຊາດຈາກຣັດເຊຍ ໄປສະໂລວາກີ ທີ່ສົ່ງຜ່ານອູແກຣນ ຈະໝົດອາຍຸໃນທ້າຍປີ 2024, ຊຶ່ງປະທານາທິບໍດີອູແກຣນ ໄດ້ປະກາດວ່າ ຈະບໍ່ຕໍ່ສັນຍາດັ່ງກ່າວ ກັບຣັດເຊຍອີກ. ທ່ານ ປູຕິນ ໄດ້ຢໍ້າວ່າ ຣັດເຊຍ ບໍ່ມີຜົນກະທົບຫຍັງ ຕໍ່ການສິ້ນສຸດຂອງສັນຍາດັ່ງກ່າວ, ແຕ່ຈະແມ່ນ ອູແກຣນເອງ ທີ່ເສຍຜົນປະໂຫຍດ ເນື່ອງຈາກວ່າ ອູແກຣນ ໄດ້ຮັກສາກາສທຳມະຊາດສ່ວນໜຶ່ງ ໃນສັນຍາດັ່ງກ່າວ ໄວ້ໃຊ້ພາຍໃນປະເທດ, ທັງໄດ້ພາສີ ຈາກການຂົນສົ່ງກາສດັ່ງກ່າວ ໄປຍັງສະໂລວາກີ.

### 3. ຂໍ້ຂັດແຍ່ງຢູ່ພາກພື້ນຕາເວັນອອກກາງ

ພາຍຫຼັງ ກຸ່ມ ຮາຍັດ ຕາຫຼີ ອັນຊາມ (Hayat Tahrir al-Sham : HTS), ໂຄ່ນລົ້ມລັດຖະບານ ຂອງ ທ່ານ ບາຊາ ອັນອັດຊາດ (Bashar-al Assad), ປະທານາທິບໍດີ ແຫ່ງ ຊີຣີ ໃນວັນທີ 8/12/2024, ສະຖານະການໃນຊີຣີ ກໍຍັງບໍ່ມີຄວາມສະຫງົບ ຍ້ອນບັນດາກຸ່ມໃນຊີຣີ ຕໍ່ສູ້ກັນ ຍາດແຍ່ງກັນຄອບຄອງຊີຣີ ພາຍໃຕ້ການສະໜັບສະໜູນຂອງພາຍນອກ ເປັນຕົ້ນແມ່ນ ອາເມຣິກາ, ອິດສະຣາແອນ ແລະ ຕວັກກີ. ຊຶ່ງໃນວັນທີ 13/12/2024, ລັດຖະມົນຕີຕ່າງປະເທດ ອາເມຣິກາ ໄດ້ຢ້ຽມຢາມຕວັກກີ ເພື່ອປຶກສາຫາລື ກ່ຽວກັບ ສະຖານນະການໃນຊີຣີ. ສ່ວນ ອິດສະຣາແອນ ໄດ້ສວຍໂອກາດຍຶດພູພຽງໂກລັນ ຂອງຊີຣີ ແລະ ໄດ້ໂຈມຕີເປົ້າໝາຍໃນຊີຣີ 480 ແຫ່ງ ໂດຍເນັ້ນໃສ່ບັນດາສາງອາວຸດ ແລະ ຄ້າຍທະຫານ ຊຶ່ງອ້າງວ່າ ເພື່ອບໍ່ໃຫ້ອາວຸດເຫຼົ່ານັ້ນ ຕົກຢູ່ໃນການຄຸ້ມຄອງຂອງກຸ່ມກໍ່ການຮ້າຍ. ໃນກອງປະຊຸມໂດຮາ ຄັ້ງທີ 22 ທີ່ປະເທດກາຕາ ທີ່ຈັດຂຶ້ນ ໃນວັນທີ 7-8/12/2024 ກໍໄດ້ປຶກສາບັນຫາພາຍໃນຊີຣີ ເປັນຫົວຂໍ້ສຳຄັນໃນການກອງປະຊຸມ, ລັດຖະມົນຕີຕ່າງປະເທດຣັດເຊຍ ໄດ້ພົບກັບຄູ່ຮ່ວມຕຳແໜ່ງຂອງຕວັກກີ ແລະ ອີຣານ, ທັງໄດ້ກ່າວວ່າ ຣັດເຊຍ ສະໜັບສະໜູນຄວາມເປັນເອກະລາດຂອງຊີຣີ ແລະ ຮຽກຮ້ອງໃຫ້ຢຸດການສູ້ຮົບທັນທີ; ການທີ່ປ່ອຍໃຫ້ກຸ່ມກໍ່ການຮ້າຍ ເຂົ້າຍຶດດິນແດນຊີຣີ ເປັນສິ່ງທີ່ຍອມຮັບບໍ່ໄດ້. ໃນວັນທີ 09/12/2024, ຕວັກກີ ໄດ້ກ່າວວ່າ: ຕົນເອງກໍເປັນປະເທດໜຶ່ງ ທີ່ໄດ້ມີສ່ວນຮ່ວມໃນຄວາມຂັດແຍ່ງໃນຊີຣີ ຊຶ່ງໄດ້ເປີດດ່ານຊາຍແດນ ຮັບເອົາປະຊາຊົນຊີຣີ 3 ລ້ານກວ່າຄົນ ເຂົ້າມາລີ້ໄພໃນຕວັກກີ. ຂະນະດຽວກັນ, ຕວັກກີ ກໍບໍ່ໄດ້ເມີນເສີຍ ຕໍ່ກຸ່ມເຄີດ ທີ່ຕວັກກີຖືວ່າເປັນກຸ່ມກໍ່ການຮ້າຍ ທີ່ຍັງລີ້ຊ່ອນຕາມແນວຊາຍແດນ ຕວັກກີ ແລະ ຊີຣີ ເພື່ອຫວັງແບ່ງແຍກດິນແດນ ຂອງຕວັກກີ. ຕໍ່ສະຖານະການຄວາມບໍ່ສະຫງົບໃນຊີຣີ ຫົວໜ້າກຸ່ມ HTS ຮຽກຮ້ອງໃຫ້ນານາຊາດເຂົ້າມາມີບົດບາດ ຢຸດຕິ

ການຮຸກຮານດິນແດນຊີຣີ ຂອງອິດສະຣາແອນ ຊຶ່ງສົ່ງຜົນກະທົບຕໍ່ການປ່ຽນຜ່ານອຳນາດໃນຊີຣີ; ຮຽກຮ້ອງໃຫ້ປົດກຸ່ມ HTS ອອກຈາກກຸ່ມກໍ່ການຮ້າຍ ເພາະວ່າ ຕົນ ບໍ່ມີຄວາມປະສົງໂຈມຕີປະຊາຊົນ, ແຕ່ຫາກມີເປົ້າໝາຍໃນການຟື້ນຟູຊີຣີ ໃຫ້ກັບມາມີຄວາມສະຫງົບສຸກອີກຄັ້ງ; ຮຽກຮ້ອງໃຫ້ປະຊາຄົມໂລກ ຍົກເລີກທຸກມາດຕະການຂວ້ຳບາດຕໍ່ຊີຣີ; ສົ່ງເງິນທີ່ອາຍັດໄວ້ຄືນໃຫ້ຊີຣີ ເພາະວ່າ ໃນເວລານີ້ ຊີຣີ ບໍ່ມີງົບປະມານ ຈະສ້າງສາພັດທະນາປະເທດ ແລະ ບໍ່ມີກຳລັງ ທີ່ຈະຕໍ່ສູ້ເພື່ອເອົາຊະນະ ອິດສະຣາແອນ ຫຼື ປະເທດອື່ນໆ ທີ່ຫວັງຢາກມາມີບົດບາດໃນຊີຣີ. ຄຽງຄູ່ກັນນັ້ນ, ຕວັກກີ ໄດ້ເປັນປະເທດທຳອິດ ທີ່ກັບມາເປີດສະຖານທູດຂອງຕົນ ພາຍຫຼັງການໂຄ່ນລົ້ມລັດຖະບານຂອງທ່ານ Assad. ກຸ່ມຕິດອາວຸດຕ່າງໆໃນຊີຣີ ຈະເລີ່ມປະກາດຍຸບກຸ່ມເພື່ອເຂົ້າຮ່ວມກັບລັດຖະບານ; ຈະປົກປ້ອງນິກາຍຕ່າງໆ ແລະ ຊົນກຸ່ມນ້ອຍ ບໍ່ໃຫ້ພວກເຂົາຖືກນຳໃຊ້ເປັນເຄື່ອງມືໃນຄວາມຂັດແຍ່ງຕ່າງໆໃນຊີຣີ. ພ້ອມດຽວກັນນັ້ນ, ລັດຖະບານຊີຣີ ຈະໃຫ້ຜູ້ຍິງໄດ້ມີສ່ວນຮ່ວມໃນກິດຈະກຳຟື້ນຟູປະເທດເປັນຕົ້ນໃນສະຖາບັນທາງສັງຄົມ, ວັດທະນະທຳ, ການເມືອງ, ສຸຂະພາບ ແລະ ການສຶກສາ, ພ້ອມທັງຈະໃຫ້ການຊ່ວຍເຫຼືອແມ່ຍິງທີ່ກຳລັງຖືກຄຸມຂັງ ແລະ ຖືກປ່ອຍຕົວອອກມາແລ້ວ.

ການຕໍ່ສູ້ລະຫວ່າງ ອິດສະຣາແອນ ແລະ ກຸ່ມຮິດບານເລາະ ຍັງດຳເນີນຕໍ່ໄປ, ເຖິງແມ່ນວ່າທັງສອງຝ່າຍຈະເຫັນດີຕໍ່ຂໍ້ຕົກລົງຢຸດຍິງ ເມື່ອວັນທີ 27/11/2024 ແລ້ວ, ແຕ່ທັງສອງຝ່າຍຕ່າງກໍອ້າງວ່າ ອີກຝ່າຍໜຶ່ງກຳລັງລະເມີດຂໍ້ຕົກລົງຢຸດຍິງ. ຂະນະດຽວກັນ, ກອງທັບອິດສະຣາແອນ ໄດ້ອອກຄຳສັ່ງບັງຄັບໃຫ້ປະຊາຊົນໃນເຂດກາຊາທີ່ຢູ່ໃນພື້ນທີ່ທາງພາກໃຕ້ຂອງເມືອງ Khan Younis ອົບພະຍົບອອກຈາກເຂດດັ່ງກ່າວທັນທີ ແລະ ສັ່ງໃຫ້ສືບຕໍ່ໂຈມຕີພື້ນທີ່ດັ່ງກ່າວ ແລະ ໃນທົ່ວເຂດກາຊາ ເຮັດໃຫ້ຈຳນວນຜູ້ເສຍຊີວິດມີຈຳນວນເພີ່ມຂຶ້ນແຕ່ລະວັນຫຼາຍສິບຄົນ ສົ່ງຜົນໃຫ້ມີຜູ້ບາດເຈັບ ແລະ ເສຍຊີວິດໃນກາຊາ ເພີ່ມຂຶ້ນຢ່າງຕໍ່ເນື່ອງ. ວັນທີ 24/12/24, ກອງທັບອິດ ສະຣາແອນ ໄດ້ໂຈມຕີໂຮງໝໍ Kamal Adwan ທາງພາກເໜືອຂອງເຂດກາຊາ ເຮັດໃຫ້ມີຜູ້ໄດ້ຮັບບາດເຈັບ ແລະ ແພດໝໍເສຍຊີວິດຢ່າງໜ້ອຍ 20 ຄົນ ແລະ ໄດ້ໃຊ້ໂດຣນໂຈມຕີຂະບວນລົດບັນທຸກເຄື່ອງຊ່ວຍເຫຼືອດ້ານມະນຸດສະທຳຢູ່ເມືອງ Deir el-Balah ຂອງກາຊາ, ເຮັດໃຫ້ເຈົ້າໜ້າທີ່ຮັກສາຄວາມປອດໄພ ເສຍຊີວິດ 4 ຄົນ ແລະ ໄດ້ສັງຫານຜູ້ນຳຂອງກຸ່ມຮູຕີ ໃນວັນທີ 23/12/2024. ສ່ວນການາດາ ໄດ້ຂຶ້ນບັນຊີກຸ່ມຮູຕີ ໃນເຢເມນ ເປັນກຸ່ມກໍ່ການຮ້າຍ. ອິດສະຣາແອນ ແລະ ກຸ່ມຮູຕີ ໃນເຢເມນ ກໍໄດ້ໂຈມຕີກັນຢ່າງໜັກໜ່ວງ, ຊຶ່ງໃນວັນທີ 18/12/2024, ອິດສະຣາແອນ ໄດ້ຍິງລູກສອນໄຟຫຼາຍລູກໃສ່ຖານທີ່ໝັ້ນທາງທະຫານຫຼາຍແຫ່ງຂອງກຸ່ມຮູຕີ ໃນເຢເມນ ຊຶ່ງໄດ້ຮັບຄວາມເສຍຫາຍ ມີຜູ້ເສຍຊີວິດ 9 ຄົນ.

## II.ການເຄື່ອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ຄຕພ ປາຖະກະຖາ ວັນຊາດທີ 02 ທັນວາ ແລະ ວັນເກີດ ປະທານ ໄກສອນ ພົມວິຫານ




ວັນທີ 19/12/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດ ພິທີປາຖະກະຖາ ວັນຊາດ ຄົບຮອບ 49 ປີ (2/12/1975-2/12/2024) ແລະ ວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 104 ປີ ( 13/12/1920-13/12/2024). ໃຫ້ກຽດປາຖະກະຖາໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າ ຄຕພ ໂດຍມີບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການ ຄຕພ ເຂົ້າຮ່ວມ. ສະຫາຍ ບຸນເຫຼືອ ໄດ້ຍົກໃຫ້ເຫັນເຖິງມູນເຊື້ອ ແລະ ຄວາມໝາຍສຳຄັນ ຂອງວັນຊາດທີ 02 ທັນວາ; ຍົກໃຫ້ເຫັນເຖິງຜົນສຳເລັດ ແລະ ຄວາມກ້າວໜ້າ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງພັກ, ລັດຖະບານຂອງ ສປປ ລາວ ຕະຫຼອດໄລຍະ 49 ປີ ທີ່ຜ່ານມາ. ພ້ອມນີ້, ຍັງໄດ້ທວນຄືນຊີວິດ ແລະ ມູນເຊື້ອການເຄື່ອນໄຫວປະຕິວັດ ແລະ ຜົນງານການຊີ້ນຳ ຂອງ ປະທານ ໄກສອນ ພົມວິຫານ ເພື່ອຮ່ຳຮຽນເອົາເປັນແບບຢ່າງ ດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ການດຳລົງຊີວິດ ແລະ ນ້ຳໃຈຮັກເຊື້ອແພງຊາດ ຂອງປະທານ ໄກສອນ ເພື່ອຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນພະນັກງານມີຜູ້ດີເດັ່ນ, ສາມາດຕອບສະໜອງໄດ້ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍໃນໄລຍະໃໝ່.

### 2) ຮັກສາການ ຫົວໜ້າ ຄຕພ ຕ້ອນຮັບ ຄະນະຜູ້ແທນ ຄຕພ ຈີນ



ໃນວັນທີ 16-19/12/2024, ຄະນະຜູ້ແທນ ຂອງຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ນຳໂດຍ ສະຫາຍ ນາງ ຮວງ ອີ້ຮົວ (Huang Yihua), ຮອງເລຂາໜ່ວຍພັກ, ຜູ້ປະຈຳການ ຄະນະກຳມະການວຽກງານພັກ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ຢ້ຽມຢາມລາວ ແລະ ໄດ້ເຂົ້າພົບ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າ ຄຕພ ແລະ ໄດ້ເຮັດວຽກຮ່ວມກັບ ຄະນະນຳ ຄຕພ, ຄະນະຈັດຕັ້ງສູນກາງພັກ ແລະ ຄະນະໂຄສະນາອົບຮົມສູນກາງພັກ ປປ ລາວ; ໄດ້ຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງ ສອງພັກ ລາວ-ຈີນ ໃນໄລຍະຜ່ານມາ, ກໍຄືການປະສານສົມທົບກັນ ລະຫວ່າງ 2 ຄຕພ ລາວ-ຈີນ ໃນການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊະຕາກຳ ລາວ-ຈີນ, ແຜນການຮ່ວມມື ລະຫວ່າງ ສອງພັກ ແລະ ການຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຈິດໃຈ ທີ່ການນຳຂັ້ນສູງ ຂອງສອງພັກ, ສອງລັດ ລາວ-ຈີນ ໄດ້ຕົກລົງເປັນເອກະພາບກັນ ໃຫ້

ປະກົດຜົນເປັນຈິງ. ໃນໂອກາດນີ້, ສອງຝ່າຍໄດ້ຕີລາຄາສູງ ຕໍ່ການພົວພັນຮ່ວມມືສອງຝ່າຍໃນໄລຍະຜ່ານມາ ໂດຍສະເພາະແມ່ນ ການພົວພັນຮ່ວມມືທາງດ້ານການເມືອງ ກໍຄື ການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ແລະ ແຜນການຮ່ວມມື ລະຫວ່າງ ສອງພັກ.

### 3) ຮັກສາການ ຫົວໜ້າ ຄຕພ ຕ້ອນຮັບ ເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ສປປ ລາວ



ວັນທີ 30/12/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ລີ ຢົງ ຈິນ, ເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ. ທ່ານ ທູດ ລີ ຢົງ ໄດ້ສະແດງຄວາມຊົມເຊີຍ ແລະ ສະແດງຄວາມເຊື່ອໝັ້ນຕໍ່ ສະຫາຍ ບຸນເຫຼືອ ພັນດານຸວົງ ທີ່ໄດ້ຮັບມອບໝາຍໜ້າທີ່ໃໝ່. ໃນໂອກາດນີ້ ສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ທີ່ມີມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດ ສປປ ລາວ-ສປປ ເກົາຫຼີ ທີ່ໄດ້ຮັບການເສີມຂະຫຍາຍ ແລະ ນັບມື້ແໜ້ນແຟ້ນຍິ່ງໆຂຶ້ນ ແລະ ສອງຝ່າຍ ຈະສືບຕໍ່ຮັກສາ ແລະ ເສີມຂະຫຍາຍມູນເຊື້ອສາຍພົວພັນລະຫວ່າງສອງພັກ, ສອງລັດ ສປປ ລາວ ແລະ ສປປ ເກົາຫຼີ ໃຫ້ນັບມື້ໄດ້ຮັບການຂະຫຍາຍຕົວຍິ່ງໆຂຶ້ນ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ.

### 4) ຮັກສາການ ຫົວໜ້າ ຄຕພ ຕ້ອນຮັບ ເອກອັກຄະຣາຊະທູດ ແຫ່ງ ຣາຊະອານາຈັກໄທ ປະຈຳ ສປປ ລາວ



ວັນທີ 18/12/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ), ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນາງ ມໍຣະກົດ ສີສະຫວັດດີ, ເອກອັກຄະຣາຊະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ຣາຊະອານາຈັກໄທ ປະຈຳ ສປປ ລາວ. ໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍຕໍ່ ສະຫາຍ ບຸນເຫຼືອ ທີ່ໄດ້ຮັບມອບໝາຍໜ້າທີ່ດຳລົງຕຳແໜ່ງເປັນຮັກສາການ ຫົວໜ້າ ຄຕພ, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບຂອງສອງປະເທດໃນໄລຍະຜ່ານມາ ແລະ ຈະຮ່ວມກັນກະກຽມສະເຫຼີມສະຫຼອງຄົບຮອບ 75 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ໃນປີ 2025, ໂດຍການສິ່ງເສີມກົນໄກການຮ່ວມມື ລະຫວ່າງສອງປະເທດດ້ວຍຫຼາຍຮູບແບບ, ພິເສດແມ່ນການກະກຽມເປີດຂົວມິດຕະພາບລາວ-ໄທ ແຫ່ງທີ 5 ຊຶ່ງຈະກາຍເປັນຈຸດເຊື່ອມຕໍ່ໃໝ່ຂອງປະຊາຊົນສອງຊາດ ໃຫ້ມີຄວາມໃກ້ຊິດ, ສະໜິດສະໜົມຍິ່ງຂຶ້ນຕື່ມ.

5) ຮັກສາການ ຫົວໜ້າ ຄຕພ ຕ້ອນຮັບ ຮອງ ລມຕ ກະຊວງການຕ່າງປະເທດ ເວເນຊູເອລາ .



ໃນລະຫວ່າງວັນທີ 19-21/12/2024, ສະຫາຍ ນ. ຕາເຕຍນາ ປູກ ໂມເຣໂນ, ຮອງລັດຖະມົນຕີກະຊວງການຕ່າງປະເທດອຳນາດປະຊາຊົນ ແຫ່ງ ສາທາລະນະລັດ ໂບລີວາຣຽນ ເວເນຊູເອລາ ໄດ້ນຳພາຄະນະຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນໂອກາດນີ້, ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ສອງຝ່າຍ ໄດ້ຕີລາຄາສູງຕໍ່ຜົນການພົບປະເຮັດວຽກ ລະຫວ່າງ ສະຫາຍ ນ. ຕາເຕຍນາ ປູກ ໂມເຣໂນ ແລະ ສະຫາຍ ຮອງລັດຖະມົນຕີກະຊວງການຕ່າງປະເທດຂອງລາວ. ນອກນັ້ນ, ກໍໄດ້ແຈ້ງໃຫ້ຊາບໂດຍຫຍໍ້ ກ່ຽວກັບສະພາບການພົ້ນເດັ່ນ ຂອງປະເທດຕົນ ໃຫ້ກັນ ແລະ ກັນຊາບ; ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ເວເນຊູເອລາ, ຊຶ່ງໄດ້ຮັບການເສີມຂະຫຍາຍໃຫ້ກ້າວເຂົ້າສູ່ລວງເລິກ.

6) ຮັກສາການ ຫົວໜ້າ ຄຕພ ຕ້ອນຮັບ ຄະນະຜູ້ແທນຂັ້ນສູງ ຂອງ ພັກສັງຄົມນິຍົມເອກະພາບເວເນຊູເອລາ



ໃນລະຫວ່າງວັນທີ 08-10/11/2024, ສະຫາຍ ຣົງເດີ ເປຢາ ຣາມີເຣດສ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກສັງຄົມນິຍົມເອກະພາບເວເນຊູເອລາ, ຮອງລັດຖະມົນຕີກະຊວງການຕ່າງປະເທດອຳນາດປະຊາຊົນເວເນຊູເອລາ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ສປປ ລາວ ແລະ ເຂົ້າພົບ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ແລະ ພົບປະເຮັດວຽກສອງຝ່າຍ ໃນວັນທີ 08/12/2024 ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນ ແລະ ທິດທາງການພັດທະນາໃນຕໍ່ໜ້າ ຂອງພັກ, ຂອງຊາດຕົນໃຫ້ກັນ ແລະ ກັນຊາບ ແລະ ທິດທາງໃນຕໍ່ໜ້າ; ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດ ການພັດທະນາຂອງສອງປະເທດສອງພັກ ແລະ ສາຍພົວພັນມິດຕະພາບ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ເວເນຊູເອລາ-ລາວ ກໍຄື ສອງຄະນະພົວພັນຕ່າງປະເທດຂອງສອງພັກ ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ເວເນຊູເອລາ ໃຫ້ນັບມື້ມີປະສິດທິຜົນຍິ່ງໆຂຶ້ນ; ພ້ອມນີ້, ສອງຝ່າຍ ໄດ້ຮ່ວມລົງນາມ ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການພົວພັນຮ່ວມມື ລະຫວ່າງ ສອງພັກ ໄລຍະ 5 ປີ (2024-

2029), ຊຶ່ງເປັນບາດກ້າວສຳຄັນ ແລະ ເປັນພື້ນຖານອັນໜັກແໜ້ນໃຫ້ແກ່ການເສີມຂະຫຍາຍການຮ່ວມມື ລະຫວ່າງ ສອງພັກ ໃຫ້ກ້າວເຂົ້າສູ່ລະດັບໃໝ່.

7) ຮັກສາການ ຫົວໜ້າ ຄຕພ ຕ້ອນຮັບ ເອກອັກຄະລັດຖະທູດ ຕວັກກີ ປະຈຳ ສປປ ລາວ



ວັນທີ 24/12/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາຂອງ ທ່ານ ໂອຣຮັນ ອີເຊີກ (Orhan Isik), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ຕວັກກີ ປະຈຳ ສປປ ລາວ. ໃນໂອກາດນີ້, ສອງຝ່າຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການປະກອບສ່ວນຂອງທ່ານທູດ ໂດຍສະເພາະ ແມ່ນສະຖານທູດ ຕວັກກີ ປະຈຳລາວ ແລະ ຄຕພ ໃນໄລຍະຜ່ານມາ ໃນການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ສປປ ລາວ ແລະ ສ.ຕວັກກີ; ຕີລາຄາສູງ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີ ລະຫວ່າງ ສອງ ປະເທດ ຕະຫຼອດໄລຍະກວ່າ 6 ທົດສະວັດ ຜ່ານມາ ແລະ ຈະສືບຕໍ່ຊຸກຍູ້ ສອງລັດຖະບານລາວ ແລະ ຕວັກກີ ໃນ ການເພີ່ມທະວີຮ່ວມມືກັບພາກສ່ວນຕ່າງໆ ລະຫວ່າງ ສປປ ລາວ ແລະ ສ. ຕວັກກີ ໃຫ້ນັບມື້ແໜ້ນແຟ້ນຍິ່ງຂຶ້ນ.

8) ກອງປະຊຸມປະຈຳປີ ຂອງ ສອງສະມາຄົມມິດຕະພາບ ລາວ - ສ.ເກົາຫຼີ ແລະ ສ.ເກົາຫຼີ - ລາວ




ໃນລະຫວ່າງວັນທີ 16-20/12/2024, ຄະນະຜູ້ແທນສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ ນຳໂດຍ ທ່ານ ໂອ ມຽງຮ້ວນ (Mr. Oh Myung Hwan), ປະທານສະມາຄົມມິດຕະ ພາບ ສ.ເກົາຫຼີ - ລາວ ພ້ອມດ້ວຍຄະນະ ໄດ້ ຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງ ສອງສະມາຄົມມິດຕະພາບ ລາວ - ສ.ເກົາຫຼີ ແລະ ສ.ເກົາຫຼີ - ລາວ ຄັ້ງທີ XIII, ໂດຍການເປັນປະທານຮ່ວມ ຂອງ ທ່ານ ຄຳສວຍ ແກ້ວດາລາວົງ, ປະທານສະມາຄົມມິດຕະພາບ ລາວ - ສ.ເກົາຫຼີ ແລະ ທ່ານ ໂອ ມຽງຮວັນ, ປະທານສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ ແລະ ໃຫ້ກຽດເຂົ້າຮ່ວມ ຂອງ ທ່ານ ຈອງ ຢອງຊູ (Mr. Jung Yung Soo), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສ.ເກົາຫຼີ ປະຈຳ ສປປ ລາວ. ກອງປະຊຸມໄດ້ສະຫຼຸບຕີລາຄາການພົວພັນຮ່ວມມືກັນລະຫວ່າງສອງສະມາຄົມໃນໄລຍະ 1 ປີຜ່ານມາ, ພ້ອມນີ້, ຍັງໄດ້ແລກປ່ຽນຄວາມຄິດເຫັນຕໍ່ທິດທາງແຜນການ ແລະ ກິດຈະກຳທີ່ສອງຝ່າຍຈະເຮັດຮ່ວມ ກັນໃນຊຸມປີຕໍ່ໜ້າ. ໃນໂອກາດນີ້, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນ ກາງພັກ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ ໄດ້ປະດັບຫຼຽນກາມິດຕະພາບ ໃຫ້ຄະນະບໍລິຫານງານຂອງສະມາ

ຄົນມິດຕະພາບ ສ.ເກົາຫຼີ - ລາວ  ຈຳນວນ 6 ທ່ານ ເພື່ອຍ້ອງຍໍຜົນງານ ແລະ ຄຸນງາມຄວາມດີຕໍ່ການປະກອບສ່ວນເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມື ລະຫວ່າງ ສປປ ລາວ ແລະ ສ.ເກົາຫຼີ ກໍຄືການປະກອບສ່ວນທຶນຮອນຊ່ວຍເຫຼືອສ້າງສາພັດທະນາ ສປປ ລາວ ເປັນຕົ້ນແມ່ນດ້ານການສຶກສາ, ສາທາລະນະສຸກ, ມະນຸດສະທຳ ແລະ ອື່ນໆ.

**9) ກອງປະຊຸມໃຫຍ່ ສະມາຊິກ ຊາວໜຸ່ມ ຄຕພ ຄັ້ງທີ II**



ວັນທີ 16/12/2024, ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ເປີດກອງປະຊຸມໃຫຍ່ ສະມາຊິກຊາວໜຸ່ມ ຄຕພ ຄັ້ງທີ II ພາຍໃຕ້ການເປັນປະທານຂອງ ສະຫາຍ ວົງຄຳ ແສນສະທິດ, ຮັກສາການເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ແລະ ໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າ ຄຕພ ; ສະຫາຍ ທອງລີ ສີສຸລິດ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ບັນດາສະຫາຍເລຂາໜ່ວຍພັກ, ບັນດາສະຫາຍຕາງໜ້າອົງການຈັດຕັ້ງມະຫາຊົນ, ຄະນະບໍລິຫານຊາວໜຸ່ມ, ສະມາຊິກຊາວໜຸ່ມ ຄຕພ ແລະ ແຂກຖືກເຊີນຈາກອົງການຈັດຕັ້ງຊາວໜຸ່ມອ້ອມຂ້າງສູນກາງ ແລະ ກະຊວງການຕ່າງປະເທດເຂົ້າຮ່ວມ.

ສະຫາຍ ວົງຄຳ ແສນສະທິດ, ຮັກສາການເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ໄດ້ຜ່ານບົດລາຍງານການເມືອງ, ບົດສະຫຼຸບສັງລວມການຊີ້ນຳນຳພາຕະຫຼອດໄລຍະ 4 ປີກວ່າ ຜ່ານມາ (2020-2024). ຊຶ່ງມີຜົນສຳເລັດອັນພົ້ນເດັ່ນຫຼາຍດ້ານ. ພ້ອມນັ້ນ, ຍັງໄດ້ ຕີລາຄາຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້. ກອງປະຊຸມຍັງໄດ້ເປັນເອກະພາບຮັບຮອງທິດທາງ, ຄາດໝາຍສູ້ຊົນ ໃນຊຸມປີຕໍ່ໜ້າ (2025-2029). ທີ່ປະຊຸມເລືອກຕັ້ງເອົາຄະນະບໍລິຫານງານຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກຊຸດໃໝ່ຈຳນວນ 9 ສະຫາຍ, ຍິງ 2 ສະຫາຍ. ກອງປະຊຸມຄັ້ງປະຖົມມະລຶກ ຄະນະຂອງຄະນະບໍລິຫານງານຊາວໜຸ່ມ ຄຕພ ໄດ້ເຫັນດີເປັນເອກະສັນເລືອກເອົາ ສະຫາຍ ວົງຄຳ ແສນສະທິດ, ເປັນເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ; ສະຫາຍ ອາເລັກວິໄລ ສຸກຈະເລີນ, ເປັນຮອງເລຂາ(ຜູ້ທີ 1), ທັງເປັນປະທານກວດກາ, ສະຫາຍ ນາງ ອ້ອຍ ໄຊຍະສິດ ເປັນຮອງເລຂາ (ຜູ້ທີ2)ແລະ ສະຫາຍ ອິດສີລິຍະພອນ ໄຊຍະວົງ, ເປັນຮອງປະທານກວດກາ. ໃນທີ່ປະຊຸມ ຍັງໄດ້ຮັບຟັງການໂອ້ລົມຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າ ຄຕພ ແລະ ສະຫາຍ ທອງລີ ສີສຸລິດ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ. ເພື່ອເປັນທິດຊີ້ນຳ, ເຂັມຊີ້ທິດເບື້ອງທາງໃນການເຄື່ອນໄຫວວຽກງານຂອງຄະນະບໍລິຫານງານຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກໃນຕໍ່ໜ້າ.